**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 2790 /ກຂອ.ບຂອ

ນະຄອນຫຼວງວຽງຈັນ, ວັນທີ 29 ພຶດສະພາ 2019

# ແຈ້ງການ

ເຖິງ : ບັນດາບໍລິສັດ ນຳເຂົ້າ ແລະ ສົ່ງອອກຍານພາຫະນະ.

ເລື່ອງ : ການນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ເຂົ້າໃນການຄຸ້ມຄອງການນຳເຂົ້າພາຫະນະ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1 (ນະຄອນ ຫຼວງວຽງຈັນ).

- ອີງຕາມແຈ້ງການ ຂອງ ກົມພາສີ ເລກທີ 04146/ກພສ, ລົງວັນທີ 23 ພຶດສະພາ 2019 ກ່ຽວກັບການນຳໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window) ເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າປະເພດພາຫະນະ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1.

ກົມການນຳເຂົ້າ ແລະ ສົ່ງອອກ (ກຂອ) ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ ການນຳເຂົ້າ ແລະ ສົ່ງອອກ ສິນ ຄ້າປະເພດພາຫະນະ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1 (ນະຄອນຫຼວງວຽງຈັນ) ແມ່ນໃຫ້ເລີ່ມນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ແຕ່ວັນທີ 24 ພຶດສະພາ 2019 ເປັນຕົ້ນໄປ. ສຳລັບບໍລິສັດໃດທີ່ຍັງບໍ່ທັນໄດ້ລົງທະບຽນນຳໃຊ້ແມ່ນໃຫ້ຮີບຮ້ອນລົງທະບຽນນຳໃຊ້ໂດຍໃຫ້ສະເໜີຫາ ບໍລິສັດ ຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈຳກັດ ເພື່ອສະໝັກຂໍຝຶກອົບຮົມ ແລະ ລະຫັດຜູ້ນຳໃຊ້ລະບົບດັ່ງກ່າວໂດຍດາວໂຫຼດເອົາແບບຟອມໄດ້ໃນເວັບໄຊ www. prod.laonsw.net ຫຼື ເວັບໄຊ www.laotradeportal.gov.la ບໍ່ໃຫ້ກາຍວັນທີ 23 ມິຖຸນາ 2019 ແລະ ນັບແຕ່ວັນທີ 24 ມິຖຸນາ 2019 ເປັນຕົ້ນໄປ ທຸກການນຳເຂົ້າ ແລະ ສົ່ງອອກ ສິນຄ້າປະເພດພາຫະນະ ຜ່ານດ່ານຂົວມິດຕະພາບ 1 (ນະຄອນຫຼວງວຽງຈັນ) ຕ້ອງໄດ້ດຳເນີນການແຈ້ງຂໍ້ມູນ ແລະ ເອກະສານຜ່ານລະບົບແຈ້ງພາສີປະ ຕູດຽວ (LNSW).

ສຳລັບການນຳເຂົ້າ ແລະ ສົ່ງອອກດ່ານພາສີສາກົນດ່ານອື່ນແມ່ນສາມາດສືບຕໍ່ນຳໃຊ້ລະບົບເຈັ້ຍແບບເກົ່າຈົນກວ່າຈະມີແຈ້ງການເພີ່ມເຕີມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ

ສຸລິຍັນ ພິລາວົງ